# ສຸຂສັນ ວັນຣີຢູນຽນ

ໂດຍ: ໜູ ນິຣາວັນ

Reunion ຄັ້ງເລີ້ມຕົ້ນ    ຈຸດກຳເນີດເທື່ອທຳອິດ
ມິດສະຫາຍຫຼວງຫຼາຍ    ຕ່າງກໍຫມາຍໃຈໄວ້
ສຸຂຫົວໃຈທຸກຄົນລ້ວນ    ເຫັນສົມຄວນ ຖ້ວນຖີ່
ສຽງຍິນດີກຶກກ້ອງ    ໂຮຮ້ອງເພື່ອນສະຫາຍ

ນັກສຶກສາຣຸ່ນເອື້ອຍອ້າຍ    ອາຈານພໍ່ຍິນດີ
ຈາກກັນນານສາມສິບປີ    ທີ່ຫ່າງຫນີໃກລ້ຳ
ຄວາມຈົດຈຳຕອນເຫັນຫນ້າ    ພາກັນຫົວແຊວຊື່ນ
ຕື່ນຫຼົງກັນກະພ່ອງນັ້ນ    ຫົວຂວັນເຢີ້ຍຢອກບໍ່ເຊົາ

ເຊັ່ນທ່ານເກດເພິ່ນກ່າວເວົ້າ    ອາຈານເງິນແທ່ງວ່າຫມໍໃດ?
ຍັງຄຸ່ນເຄືອງຢູ່ໃນໃຈ    ເຄີຍຮ່ວມຮຽນຢູ່ໃນຫ້ອງ
ແຕ່ສມອງພັດຕັນຕື້    ສັງມາຄືເກີເກົ່າ    ແທ້ເດ
ເຮົາຈົດຈຳໂຕບໍ່ໄດ້    ອະພັຍດ້ວຍ ຍ້ອນວ່າເທີ໋ງ

ຍັງລຳເພິງຢູ່ບໍ່ແລ້ວ    ແນວປ່ອຍໄກ່ໄປຫຼາຍໂຕ
ໂງໄປທາງເຮືອນຣົດ    ອິດລັກຫົວນ້ຳລາຍຟົ້ງ
ແກ້ວມະນີວົງຢືນງົງເຊື້    ເຜີຫນ້ອຍດຽວ ພັດໄດ້ທ່າ
ທ່ານເກດຍ່າງເຂົ້າມາ    ວາງທ່າເປັນຜູ້ຮູ້    ທັງຫົວຍິ້ມສົ່ງຫາ

"ອາຈານວັນພິລາ ບໍຂ້ານ້ອຍ"    ເກດປ່ອຍໄກ່ເທື່ອທີສອງ
ແກ້ວມະນີວົງຄິດລຳພອງ    ກ່າວທັກທາຍ "ສະບາຍນ້ອງ"
ຄວາມຈອງຫອງກໍເລີຍເນັ້ນ    ເຫຼັ້ນລະຄອນໄປຕໍ່

ພ້ອມທັງຖາມຂ່າວຂໍ້ "ນ້ອງຮຽນຊັ້ນຮຸ່ນໃດ?"

ທ່ານເກດຖາມຂ່າວອ້າຍ ວ່າ "ເອື້ອຍໃຫຍ່ມານຳກັນ ບໍ່ນໍ?"
ແກ້ວມະນີວົງກໍໄຂຂານ "ບໍ່ໄດ້ມານຳເດີນ້ອງ"
ສອງທັກທາຍຂາຍໜ້າ ທັງອາຈານວັນພິລາ ເພິ່ນຊ້ຳບໍ່ຮູ້ເຣື່ອງ
ສຽງນັ້ນເມືອງພິດພື້ນ ມັນຕັນຕື້ນຊື່ນໃຈ....

ນັກສຶກສາຮວມນັບໄດ້ ທັງໝົດຮ່ວມທົກສິບ
ຢິບຢື່ນຄວາມສັມພັນ ຮ່ວມອາຈານແປດຄົນພ້ອມ
ມີຈິດໃຈແຮງກ້າ ເຕັມໃຈມາເຫັນນ້ອງນຸ່ງ
ທັງເພື່ອນຝູງທຸກເຂດກ້ຳ ໄດ້ບິນຂ້າມທະວີບໃກ

ມີສອງຄົນໂຊກເພິ່ນໃຫ້ ບິນມາຈາກວຽງຈັນ
ຄືອາຈານສອນການເຮືອນ ໝູ່ນັກຮຽນຍິ່ງຈຳໄດ້
ເອື້ອຍສົມໃຈເປັນຫົວໜ້າ ທຳພັກຍິ່ງຕັ້ງແຕ່ກ່ອນ
ເດີນຮ່ວມທາງສັນຈອນ ມະນີແວງຮຸ່ນຫ້າ ກໍມາເຂົ້າຮ່ວມພິທີ

ສ່ວນພວກເຮົາຜູ້ຢູ່ພີ້ ສະຫະຣັດ ອະເມຣິກາ
ຫຼາຍສິບຄົນບິນມາ ຈາກຣັດແດນເໜືອໃຕ້
ຫຼາຍຄົນຫົວແກມໄຫ້ ດີໃຈຫຼາຍໄດ້ພໍ້ໝູ່
ຄຣູອາຈານກໍພ້ອງນັ້ນ ກະສັນໂອ້ອ່າວແຕ່ຫຼັງ

ນ້ຳຕາຊຶມບໍ່ອາດຢັ້ງ ຈາກຝຣັ່ງຄື ບຸນທຽວ
ມາຄົນດຽວຫົວໃຈພອຍ ປ່ອຍທ່າທີ ສັກສິກ້າ
ມາໃນນາມຕາງໜ້າ ຄຣູຫູກເຈັດໃນຝຣັ່ງ
ຫຼັ່ງນ້ຳຕາອາບແກ້ມ ແນມເຫັນເພື່ອນໝູ່ສະຫາຍ

ນາງຈັນທອນກໍຫາກໄດ້ ບິນມາຈາກແດນສວິສ
ສິດອາຈານພາກັນຊຸມ ຫຸ້ມໄຕ່ຖາມຂ່າວຄາວກີ້
ນັບແຕ່ຫນີໄກບ້ານ ມາເຫັນກັນດ້າມລະເທື່ອ
ເມືອແລ້ວຈຳຈີ່ຫນ້າ ຢ່າລືມທ້ອງເມື່ອພົບກັນ

ສ່ວນອີກທາງຫນຶ່ງນັ້ນ ບິນມາຈາກ ການາດາ
ຄືອາຈານວັນພິລາ ດົ້ນດັ້ນມາຄົນດຽວຊໍ້າ
ຈຳໃຈລາເມັຽແກ້ວ ເອື້ອຍໂພສີ ແສນຫ່ວງ
ຄິດຮອດຫຼາຍໃຈບໍ່ຊ່ວງ ເປັນງຶງໆງ້ວງໆ ໂທທວງເຈົ້າທຸກວັນ

ຍັງອີກຄູ່ຫນຶ່ງນັ້ນ ຮັກກັນກ່ອນຄາວຫຼັກເຈັດ
ເບັດມຸ້ງຫມາຍມາຫາ ນ້ອງນັກຮຽນແຕ່ຄາວນັ້ນ
ມານຳດຽວກຽວຫມັ້ນ ຄືອາຈານຄຳກິ່ງ
ເອື້ອຍແກ້ວຕາຕິກລິງ ຫມັ້ນຄົງຮັກທ່ຽງແທ້ ບໍ່ແປປິ້ນປ່ຽນໄປ

ສົມເປັນຕົວຢ່າງໃຫ້ ນ້ອງນຸ່ງເປັນບົດຮຽນ
ເພິ່ນພາກພຽນສຶກສາ ເອື້ອຍແກ້ວຕາຊ່າງຫັນຫ້າວ
ຖືວ່າເປັນຈຸດກ້າວ ພາສາລາວໃຫ້ຍັ້ງຢູ່
ເປັນຄຣູສອນສັ່ງຊີ້ ຈົນບັດນີ້ ເອື້ອຍເກັ່ງຫຼາຍ

ທາງ ບີຊີ ກໍຫາກໄດ້ ບິນມາດ່ວນທັນທີ
ທ່ານບຸນມີສົມມາວົງ ດັ່ງທີ່ປົງໃຈຫມັ້ນ
ຈຸດສຳຄັນຄືການໄດ້ ມາສັງສັນສິດຄຣູເກົ່າ
ເພື່ອໄດ້ຈາປາກເວົ້າ ແຖລງເຢີ້ຍຢອກແຍງ

ບໍ່ແມ່ນຫາເວົ້າແກ້ງ    ທ່ານເງິນແຫ່ງເກາຕະວົງ
ທີ່ຍັງຄົງຄອງຮັກ    ຄູ່ເອື້ອຍຍິມມະລາແກ້ວ
ເປັນແນວທາງທັນທ້າວ    ຊາວຫຼັກເຈັດເອົາຕົວຢ່າງ
ວຽກສ່ວນຮວມເພິ່ນຊ່ວຍສ້າງ    ບໍ່ເຄີຍວ້າງນັ່ງເສີຍ

ສນຸກຫົວຍອກເຢີ້ຍ    ທ່ານເຈົ້າຮຸ່ນທອງສວັດ
ນາງບຸນເຖິງໄດ້ລາລັດ    ບິນດ່ວນມານຳຫນ້າ
ປະໃຫ້ທອງສວັດດິ້ນ    ບິນມາຕາມໂດຍດ່ວນ
ມ່ວນນຳກັນຮອດມື້ເຊົ້າ    ກໍບິນຟ້າວດ່ວນເມືອ

ເຫຼືອອີກຄືນຫນຶ່ງນັ້ນ    ອາຈານເລກຄຳສີ
ມີເມັຽມາຕິດຕາມ    ຮ່ວມນຳຫຽມຂ້າງ
ເຫີນຫ່າງໃກນານລ້ຳ    ຍັງຈົດຈຳລູກສິດເກົ່າ
ນ້ຳຕາລິນລົງສູ່ເບົ້າ    ດີໃຈແທ້ໄດ້ພົບເຫັນ

ຍັງຄຳນຶງຢູ່ບໍ່ເວັ້ນ    ອາເສັ້ຽໃຫຽ່ເມືອງ Cali
ທ່ານຄຳມີ  ນາງລຳພອນ    ຫມູ່ສະອອນຄວາມອາຍເຈົ້າ
ຈົນບໍ່ຈັກແນວເວົ້າ    ຍາມຖືໄມຄ໌ ຍິກຍິ້ນ
ບາດລຳພອນພັດກ້າຂຶ້ນ    ຄວນເພງຮ້ອງຍອກໃສ່ຜົວ

ໂອ໋ຍ  ອ້າຍຄຳມີ ເຈົ້າຢ່າມົ້ວ    ນ້ຳຕາຮັກຈາກເມັຽຫຼວງ
ຢ່າມົວຄວງສາວຕື໋ມ    ຍິ້ມກໍຫວານນ້ຳຕານຍ້ອຍ
ຢ່າໄປຫຼົງເມັຽນ້ອຍ    ຫຼືມີສອງຄອງຍິງໃຫມ່
ເຫັນນ້ຳຕາເມັຽໃຫຽ່  ນີ້ຄືເພງຍອກເຍົ້າ  ຢ່າເປັນໄດ້ດັ່ງເພງ ເດີອ້າຍເດີ

ເພິ່ນຄື້ນເຄງຍິ້ມເປີ້ຍ    ເຄີຍຮັກຮ່ວມຮຽນສຶກສາ

ອິນທວາຜູ້ຊິງຄຸນ    ໂລກຊ່າງຫມຸນວົງກົມແທ້
ແລໄປເຫັນຄົນຮູ້    ຄາວຮຽນຄຣູເປັນຊູ້ເກົ່າ
ຄວາມຫຼັງໆຄິດຢາກເວົ້າ    ຊິໄຂສ້ຽງກ່າວແຖລງ

ຂໍໂທດເດີທີ່ຕັ້ງແກ້ງ    ຊຽນກອນມ່ວນໃຫ້ນວນຫູ
ຍ້ອນວ່າ ຫນູນິຣາວັນ    ຄິດມ່ວນງັນຈຶ່ງຊຽນໄວ້
ມື້ຈັ່ງໄຮ ຄວາຫາເຈົ້ຽ    ໃຈນົວເນັ້ຽຄຶດຢາກຢອກ
ບອກເປັນກອນຕ່ອນທ້າຍ    ວ່າໃຈຫ້າວຫ່ວງທຸກຄືນ

ຝາກເປັນກອນກ່າວຄົ້ນ    ຈຶ່ງຄິດຮ່ຳຄວນຄິດ
ນິສິດຄຣູອາຈານ    ຄູ່ສູ່ຄົນຈຶ່ງຫັນຫນ້າ
ພາກັນຮວມໃຈຫມັ້ນ    ຄວາມສັມພັນໃຫ້ສືບຕໍ່
ອີກສອງປີຈຶ່ງພົບພໍ້    ໃຫ້ເກາະກ້ຽວສືບທາວ

ອາຍຸຊັຍ ຍິ່ງເລັ່ງຈ້າວ    ຄືຄ້ອຍງ່ຽງລົງໂພນ
ຢ່າໃຫ້ດົນນານຫຼາຍ    ຢ່າເຊື່ອມຄາຍໃຫ້ຝັງແຫນ້ນ
ຈັບມືຖືແຂນໄວ້    ຫົນທາງໃກ  ໃຫ້ຕິດຕໍ່   ກັນເນີ
ປະສານໃຈຈິດຈໍ່   ລໍພົບກັນເທື່ອຫນ້າ     ສັນຍາຫມັ້ນຢ່າຟ້າວລືມ......